**ຕອນທີ໔**

ພາກວິເຄາະວິຈານ

ໃນພາກນີ້ ນອກຈາກບັນຫາທີ່ຖາມໄປເມື່ອພາກກ່ອນແລ້ວ ຂ້າພະເຈົ້າຍັງຈະໄດ້ວິເຄາະວິຈານແລະລົງເລິກເຖິງບັນຫາຕ່າງໆທີ່ກ່ຽວກັບເຈົ້າເພັຊຣາດອີກດ້ວຍ



ຕໍ່ຄຳຖາມທີ່ວ່າ ເຈົ້າເພັຊຣາດຄິດການຜິດບໍ່ທີ່ເພິ່ນສ້າງຕັ້ງຣັຖບານລາວອິສຣະຂຶ້ນ? ຂ້າພະເຈົ້າວ່າການທີ່ເພິ່ນເຮັດແນວນັ້ນແມ່ນຖືກ ເພາະນັ້ນເປັນຄວາມຮຽກຮ້ອງຕ້ອງການຂອງປະຊາຊົນທີ່ຢາກມີສິດເສຣີພາບຢ່າງແທ້ຈິງ ອີກຢ່າງຖ້າເພິ່ນບໍ່ເຮັດແນວນັ້ນ ເພິ່ນກໍຈະຫມົດຄວາມເປັນຜູ້ນຳ ດ້ວຍວ່າເພິ່ນເປັນຜູ້ຕ່າງຫນ້າຂອງປວງຊົນ ແລະທີ່ສຳຄັນເພິ່ນກໍຕ້ອງການເຮັດໃຫ້ເມືອງລາວເປັນເອກລາດຢູ່ແລ້ວ ໂອກາດທອງອັນນີ້ ຄົນທີ່ຄິດການໄກຢ່າງເພິ່ນບໍ່? ຈະໄລລາໄດ້ ແຕ່ບັນຫາມັນກໍຍັງມີວ່າຂະບວນການລາວອິສຣະແມ່ນມີຕົ້ນຕໍ່ມາຈາກຂະບວນການເສຣີໄທ ຊຶ່ງນຳໂດຍທ່ານປຣີດີພະນົມຍົງ ແລະສນັບສນູນໂດຍຜູ້ນຳທີ່ສຳຄັນຂອງພາກອີສານໃນສໄມນັ້ນ ເຊັ່ນທ່ານຕຽງສີຣິຂັນຜູ້ແທນແຂວງສະກົລນະຄອນ ທ່ານທອງອິນພູຣິພັດຜູ້ແທນແຂວງອຸບົນ ແລະທ່ານຈຳລອງດາວເຮືອງຜູ້ແທນແຂວງສາຣະຄາມເປັນຕົ້ນ ນອກຈາກນັ້ນທາງຝ່າຍລາວກໍມີທ່ານອຸ່ນຊະນະນິກອນແລະມະຫາສີລາວີຣະວົງຊຶ່ງລົບຫນີໄພຈາກຝຣັ່ງເສດໄປຢູ່ປະເທດໄທໃນປີ໑໙໔໑-໔໔ ຈະວ່າແລ້ວຂບວນການລາວອິສຣະບໍ່ແມ່ນແນວຄິດຂອງເຈົ້າເພັຊຣາດ ດັ່ງນັ້ນເພິ່ນຈຶ່ງບໍ່ທັນໄດ້ມີເວລາກະກຽມການຄັກແນ່ ຜົນກໍຄືເມື່ອທັງຂບວນການລາວອິສຣະແລະທັງລັຖບານລາວອິສຣະຕ້ອງໄປກ່ຽວກັບພັນກັບການເມືອງຂອງໄທ ມັນກໍເລີຍຢູ່ນອກເຫນືອອຳນາດແລະວິຈານຍານຂອງເພິ່ນໃນທີ່ສຸດ ດັ່ງທີ່ພວກເຮົາຮູ້ເມື່ອການປ່ຽນແປງຢູ່ໄທເກີດຂຶ້ນໃນພາຍຫລັງ ຊຶ່ງເປັນຜົນໃຫ້ທ່ານປຣີດີພນົມຍົງຕ້ອງໄດ້ຫນີໄພການເມືອງໄປຢູ່ຕ່າງປະເທດ ແລະພວກຜູ້ນຳຢູ່ອີສານຕ້ອງຖືກຂ້າຢ່າງຖອນຮາກ ຣັຖບານລາວອິສຣະຢູ່ຫມົດທີ່ເພິ່ງ ແລະກໍຕ້ອງສລາຍຕົວໄປໃນທີ່ສຸດ

ຕໍ່ຄຳຖາມທີສອງທີ່ວ່າ ເມື່ອຝຣັ່ງມີໄຊ ເປັນຫຍັງເພິ່ນຈຶ່ງບໍ່ຍອມສະວາມີພັກຕໍ່ຝຣັ່ງ?
ຂ້າພະເຈົ້າຄິດວ່າ ໃນເມື່ອເພິ່ນໄດ້ລົງກະເທີນຕໍ່ສູ້ກັບຝຣັ່ງແລ້ວ ມັນກໍບໍ່ງ່າຍໆທີ່ເພິ່ນຈະຄືນຄຳໄດ້
ນຶ່ງມາກໍຍ້ອນກຽດສັກສີຂອງເພິ່ນ ແລະສອງມາກໍຍ້ອນເປັນຜູ້ນຳທີ່ປະຊາຊົນໄວ້ເນື້ອເຊື່ອໃຈ
ການເຮັດຫຍັງເຄິ່ງທາງນັ້ນບໍ່ແມ່ນອຸດົມການຂອງເພິ່ນຢູ່ແລ້ວ ຂ້າພະເຈົ້າຍັງຄິດອີກວ່າ
ສິ່ງທີ່ເພິ່ນໄດ້ປະກາດຕົວເປັນອະຣິກັບຝຣັ່ງນັ້ນ ຝຣັ່ງຄົງຈະບໍ່ລືມງ່າຍໆ
ເຂົາຄົງບໍ່ໄວ້ເນື້ອເຊື່ອໃຈໃຫ້ກຳຕຳແຫນ່ງທີ່ສຳຄັນໃນການປົກຄອງລາວຢູ່ຄືເກົ່າ
ອີກຢ່າງຮອຍລ້າວລະຫວ່າງເຈົ້າເພັຊຣາດແລະເຈົ້າແຜ່ນດິນຫລວງພະບາງນັ້ນຍາກທີ່ປະສານໄດ້ຄື
ນອີກ ດັ່ງນັ້ນທາງອອກສຸດທ້າຍກໍຄື
ເດີນຕາມທາງທີ່ປວັດສາດມອບຫມາຍໃຫ້ຈົນເຖິງທີ່ສຸດນັ້ນເອງ

ຕໍ່ຄຳຖາມທີສາມທີ່ວ່າ ຫລືບໍ່ຊັ້ນ ກໍກັບຄືນມາລາວໃນປີ໑໙໔໙
ຄືກັບຜູ້ນຳລາວອິສຣະຜູ້ອື່ນໆເຊັ່ນເຈົ້າສຸວັນນະພູມມາເປັນຕົ້ນ
ມັນກໍຄົງບໍ່ພົ້ນພົວພັນກັບຄຳຕອບໃນຂໍ້ທີສອງ
ອີກຢ່າງເຈົ້າເພັຊຣາດໄດ້ກາຍເປັນຜູ້ຫມົດອຳນາດໄປແລ້ວ
ແມ້ແຕ່ຄົນຮ່ວມລັຖບານຂອງເພິ່ນເຊັ່ນເຈົ້າສຸວັນນະພູມມາ
ພະຍາຄຳມ້າວແລະທ່ານກະຕ່າຍກໍຕິດຕໍ່ຢ່າງລັບໆກັບຝຣັ່ງ ໂດຍທີ່ເພິ່ນບໍ່ຮູ້ແລະອະນຸຍາດໃຫ້ເລີຍ
ຫາກວ່າເພິ່ນກັບໄປເມືອງລາວອີກ
ເພິ່ນກໍຄົງຈະບໍ່ໄດ້ຢູ່ໃນຖານະທີ່ຈະກຳໄຊກຊະຕາຂອງຊາດບ້ານເມືອງຄືເກົ່າກ່ອນ

ເປັນອັນວ່າການຕັ້ງລັຖບານລາວອິສຣະມີຜົນດີໃຫ້ແກ່ຊາດບ້ານເມືອງໃນຂັ້ນຍາວໄກ
ເພາະມັນເປັນບັງຄັບໂດຍທາງອ້ອມໃຫ້ຝຣັ່ງຫາຫົນທາງແກ້ບັນຫາລາວໃຫ້ຢ່າງຈິງຈັງແລະໄວຂຶ້ນ
ຊຶ່ງນີ້ບໍ່ໄດ້ຢູ່ໃນແຜນການຂອງຝຣັ່ງທີ່ມີຕໍ່ດິນແດນລາວເລີຍ ແຕ່ຜົນເສັຽກັບເປັນອັນວ່າ
ມັນໄດ້ທຳລາຍລັຖບຸຣຸດຂອງຊາດລາວໄປຢ່າງຫນ້າເສັຽດາຍ
ກ່ອນທີ່ເພິ່ນຈະໄດ້ໃຊ້ຄວາມຮູ້ຄວາມສາມາດ
ແລະບາຣະມີທີ່ເພິ່ນສ້າງໄວ້ກັບປວງຊົນລາວໃຫ້ເກີດຫນໍ່ອອກຜົນແກ່ແຜ່ນດິນທີ່ຮັກຂອງເພິ່ນຜືນນີ້



ມາບາດນີ້ ຂ້າພະເຈົ້າຈະຂໍວິເຄາະວິຈານກ່ຽວກັບບັນຫາເຈົ້າເພັດຊະຣາດທີ່ຍັງຄ້ອງຄາໃນປວັດສາດທີ່ບາງຄົນສຶກສາເລື້ອງນີ້ອາດຈະເຄີຍໄດ້ຍິນມາ ບັນຫານັ້ນມີດັ່ງຕໍ່ໄປນີ້

1. ຮອຍລ້າວລະຫວ່າງເຈົ້າສີສວ່າງວົງແລະເຈົ້າເພັດຊະຣາດ
2. ເຈົ້າເພັດຊະຣາດເປັນນັກສວຍໂອກາດບໍ່?
3. ເຈົ້າເພັດຊະຣາດອຽງໄທບໍ່?
4. ຄວາມປີ້ນປອກຂອງນະໂຍບາຍປະເທດມະຫາອຳນາດໂດຍສະເພາະສະຫະລັດອະເມຣິກາ
5. ເປັນຫຍັງຜູ້ນຳຣຸ່ນໃຫມ່ສໄມໄດ້ເອກລາດຂອງລາວ ຈຶ່ງບໍ່ມັກເຈົ້າເພັດຊະຣາດ ຍົກຕົວຢ່າງທ່ານຜຸ່ຍຊະນະນິກອນເປັນຕົ້ນ?
6. ຖ້າບໍ່ມີເຫດການປວັດສາດເຊັ່ນສົງຄາມໂລກຄັ້ງທີສອງເກີດຂຶ້ນ ເຈົ້າເພັດຊະຣາດຈະເປັນແນວໃດ?
7. ເປັນຫຍັງທາງລະບອບໃຫມ່ຈຶ່ງບໍ່ໃຫ້ຄວາມສຳຄັນແກ່ເຈົ້າເພັດຊະຣາດໃນການຂຽນປະວັດສາດສະບັບຫລັງໆນີ້?
8. ຄຳທີ່ວ່າ ເຈົ້າເພັດຊະຣາດຄືລັຖບຸຣຸດຂອງຊາດລາວນັ້ນ ມີນ້ຳຫນັກຂນາດໃດ?

## I. ຮອຍລ້າວລະຫວ່າງເຈົ້າສີສວ່າງວົງແລະເຈົ້າເພັດຊະຣາດ

ເລື້ອງນີ້ນັບວ່າເປັນເລື້ອງທີ່ຂ່ອນຂ້າງຮຸນແຮງເກີນກ່ວາທີ່ຂ້າພະເຈົ້າປະມານໄວ້ໃນຄັ້ງແຮກ ສາເຫດທີ່ຂ້າພະເຈົ້າກ້າເວົ້າແນວນີ້ກໍເພາະ

ໃນປື້ມ ບຸຣຸດເຫລັກຂອງລາວ ສະບັບເປັນພາສາອັງກິດ (Iron Man of Laos) ແປໂດຍ John Murdoch ໄດ້ຂຽນໄວ້ວ່າ
ເຈົ້າເພັຊຣາດແລະເຈົ້າສີສວ່າງວົງເຄີຍຊິກຕີກັນຕອນກ່ອນຈະຂື້ນມາມີບົດບາດໃນພາຍຫລັງ
ໂດຍວ່າໃຜກໍວ່າໃຜເກ່ງ ແລະຜູ້ທີ່ຂຽນປື້ມດັ່ງກ່າວ
ຊຶ່ງສັນນິຖານວ່າແມ່ນເຈົ້າເພັຊຣາດເອງເປັນຜູ້ຂຽນ
ຫລືບໍ່ຊັ້ນກໍແມ່ນຜູ້ໃດຜູ້ນຶ່ງທີ່ເຈົ້າເພັຊຣາດບອກໃຫ້ຂຽນ ກ່າວໄວ້ວ່າ
ເຈົ້າຄໍາຜີວຊຶ່ງຕໍ່ມາໄດ້ເປັນມະເຫສີຂອງເຈົ້າສີສວ່າງວົງນັ້ນ ເຄີຍມັກຮັກກັບເຈົ້າເພັຊຣາດມາກ່ອນ
ຫາກເລື້ອງເປັນເຊັ່ນນີ້ແທ້ ຄວາມບາດຫມາງສ່ວນຕົວລະຫວ່າງທ່ານທັງສອງກໍຄົງຫລີກລ້ຽງບໍ່ພົ້ນ
ບໍ່ພໍເມື່ອເຈົ້າເພັຊຣາດປະກາດສ້າງຕັ້ງລັຖບານລາວອິສຣະຂຶ້ນ
ໂດຍປົດເຈົ້າສວ່າງວົງລົງຈາກຕໍາແຫນ່ງພະເຈົ້າແຜ່ນດິນ
ມັນກໍກາຍເປັນເລື້ອງຄໍຂາດບາດຕາຍເຖິງຂນາດນັ້ນເລີຍ ອີກຢ່າງຢ່າລືມໄປວ່າ
ເຈົ້າສີສວ່າງວົງໄດ້ປົດເຈົ້າເພັຊຣາດອອກຈາກຕໍາແຫນ່ງມະຫາອຸປຣາດກ່ອນມາກ່ອນເຫດການຊິບານປາຍແລ້ວ

ຕາມເບິ່ງ ທາງຂະບວນການລາວອິສຣະຄົງຈະຢາກເຮັດແບບປະເທດໄທ
ຕອນທີ່ທ່ານປຣີດີພນົມຍົງແລະຈອມພົນແປກພິບຸນສົງຄາມເຮັດກໍ່ການລົ້ມລ້າງລະບອບສົມບູນຣາຊາທິຣາດຢູ່ເມືອງໄທໃນປີ໑໙໓໘ນັ້ນ ແມ້ນຢູ່ວ່າ
ເຖິງຈະມີພະເຈົ້າແຜ່ນດິນຢູ່ກໍຄົງແຕ່ຢູ່ໃຕ້ກົດຫມາຍລັຖທັມມະນູນເທົ່ານັ້ນ
ບໍ່ໄດ້ມີອໍານາດເດັດຂາດຄືແຕ່ເກົ່າ ການກະທໍາດັ່ງກ່າວ ຖ້າບໍ່ມີເລື້ອງບາດຫມາງໂດຍສ່ວນຕົວແລ້ວ
ກໍຄົງຈະລົງລອຍກັນໄດ້ຢູ່ ແຕ່ຕ່າງຄົນກໍຕ່າງມີມິດທິມານະ ຜົນຮ້າຍກໍເກີດແກ່ບ້ານເມືອງຈົນໄດ້
ຄືວ່າຄົນທີ່ມີຄວາມສາມາດທີ່ສຸດຂອງເມືອງລາວ ທີ່ຈະສ້າງຕັ້ງລາວໃຫ້ເປັນລາວໄດ້ແທ້
ຕ້ອງໄດ້ມີອັນເປັນໄປຢ່າງຫນ້າເສັຽດາຍທີ່ສຸດ

## II. ເຈົ້າເພັຊຣາດເປັນນັກສວຍໂອກາດບໍ່?

ຄໍາຖາມນີ້ຖືກຖາມຂຶ້ນເພາະທາງຝ່າຍຄົນອີສານເຊື້ອສາຍລາວເຊັ່ນທ່ານອຸ່ມປາງຄໍາຂຽນຂຶ້ນໃນປື້ມນ້ອຍໆຂອງທ່ານວ່າ ເຈົ້າເພັຊຣາດເປັນພຽງນັກສວຍໂອກາດຊື່ໆ
ຈາກການເບິ່ງຂອງຄົນພາຍນອກເຊັ່ນທ່ານອຸ່ມປາງຄໍາ ມັນກໍມີລັກສນະເຊັ່ນນັ້ນແທ້
ເພາະຂະບວນການລາວອິສຣະໄດ້ແບບມາຈາກພວກລາວອີສານ ແຕ່ເຖິງບໍ່ມີຂບວນການນີ້
ເຈົ້າເພັຊຣາດໃນນາມຜູ້ປົກຄອງຝ່າຍລາວ ກໍຕ້ອງເຮັດຄືປະເທດເພື່ອນບ້ານເຊັ່ນວຽດນາມເປັນຕົ້ນ

ເພາະນີ້ເປັນສໄມການຕື່ນຕົວຂອງພວກທີ່ຢູ່ໃຕ້ການປົກຄອງຂອງພວກອະນານິຄົມທັງຫລາຍ
ດ້ວຍວ່າຖານກໍາລັງທາງການເມືອງຂອງເພິ່ນ
ມັນບໍ່ແໜ້ນໜາແລະແຜ່ກະຈາຍເຖິງຂັ້ນບ້ານນອກຄອກຄະເນຄືພວກວຽດທີ່ມີການຈັດຕັ້ງຢ່າງມີປ
ະສິດທິພາບມາເຫີງນານ ເພິ່ນຈຶ່ງຕົກຈາກອໍານາດງ່າຍ ແຕ່ຈະວ່າແລ້ວ
ຍ້ອນວ່າພົວພັນກັບແລະເຊື່ອໝັ້ນໃນການສນັບສນູນແລະຊ່ອຍເຫລືອຈາກຝ່າຍໄທຫລາຍຈົນເກີນໄ
ປ ຝຣັ່ງຈຶ່ງເຫັນເພິ່ນເປັນສັດຕູ ຢ່າງທີ່ເຂົ້າກັນຕໍ່ໄປບໍ່ໄດ້ອີກແລ້ວ
ເປັນອັນວ່າໄພ່ການເມືອງໄທນີ້ນໍາຜົນຮ້າຍ ຢ່າງບໍ່ໃຜຄາດຄິດ ມາສູ່ເມືອງລາວອີກຄັ້ງ

## III. ເຈົ້າເພັຊຣາດອ່ຽງໄທບໍ່?

ຢ່າງຕິດແນບຄືຂໍ້ທີສອງ ມັນຈຶ່ງຫລີກລ້ຽງບໍ່ໄດ້ທີ່ຈະຖາມຄໍາຖາມຂ້າງເທິງນີ້ ຕາມທີ່ເຫັນໆ
ມັນກໍມີບາງອັນທີ່ສໍ່ວ່າ ເຈົ້າເພັຊຣາດອ່ຽງເຂົ້າຂ້າງໄທ
ເຊັ່ນການທີ່ເຊື້ອສາຍເພິ່ນໄດ້ຕໍາແໜ່ງມະຫາອຸປຣາດນີ້ ກໍຍ້ອນການແຕ່ງຕັ້ງຂອງໄທ
ໃນຂະນະດຽວກັນ ຕອນໄທຍື່ນຂໍ້ສເນີຕໍ່ຝຣັ່ງເສດ ຂໍເອົາດິນແດນລາວຄືນໃນປີ໑໙໔໐ນັ້ນ
ເພິ່ນກໍໄດ້ຕິດຕໍ່ກັບຜູ້ຕ່າງໜ້າໄທທີ່ຈັງຫວັດໜອງຄາຍວ່າ
ຖ້າຫາກໄທຈະຂໍເອົາລາວຄືນໄປແລະຫວັງຢາກໃຫ້ຄົນລາວຮ່ວມມືນໍານັ້ນໃຫ້ໄທທໍາສັນຍາຫລືໃຫ້ຄໍ
າໝັ້ນສັນຍາຄັກແນ່ວ່າ ຈະບໍ່ເອົາລາວໄປໂອນເປັນໄທ ຄືພາກອີສານ
ແຕ່ຕ້ອງໃຫ້ລາວເປັນລັດນຶ່ງຕ່າງຫາກ ແລ້ວຈຶ່ງໂຮມກັນເຂົ້າເປັນສະຫະພັນທະລັດກັບໄທ
(Confederation Lao-Thai) ອີກຢ່າງຕອນເພິ່ນໄປຫລີ້ໄພການເມືອງຢູ່ເມືອງໄທນັ້ນ
ເພິ່ນກໍໄດ້ເອົາກັບຄົນໄທອີກດ້ວຍ ມາບັດນີ້ ເພື່ອຄວາມແຈ້ງຂາວຂອງບັນຫານີ້
ເຮົາມາພາກັນເບິ່ງທີ່ມາແລະທີ່ໄປຂອງແຕ່ລະຂໍ້ ສໍາລັບຂໍ້ທີ່ວ່າ
ເຊື້ອສາຍຂອງເພິ່ນມີອໍານາດກໍເພາະໄທແຕ່ງຕັ້ງໃຫ້ໃນຂັ້ນເລີ້ມຕົ້ນນັ້ນ ກໍຖືກແທ້ ແຕ່ຕໍ່ໆມາ
ການແຕ່ງຕັ້ງໃນຕົວຂອງມັນເອງບໍ່ມີຄວາມໝາຍຫຍັງ
ຫາກວ່າຄົນໃນເຊື້ອສາຍນັ້ນບໍ່ໄດ້ເລື້ອງໄດ້ການແທ້ ອີກຢ່າງ
ຫລັງຈາກຝຣັ່ງເຂົ້າມາປົກຄອງລາວແລ້ວ ແລະອຸປຣາດບຸນຄົງເສັຽຊີວິດລົງໃນປີ໑໙໘໐
ເຂົາເຈົ້າກໍໄດ້ລົ້ມເລີກຕໍາແໜ່ງອຸປຣາດຖີ້ມ
ການທີ່ເພິ່ນໄດ້ດີບໄດ້ດີໃນພາຍຫລັງຈົນເຖິງຂັ້ນເປັນຜູ້ມີອໍານາດສູງສຸດທາງດ້ານຝ່າຍປົກຄອງຕົວຈິ
ງຂອງເມືອງລາວ ກໍຍ້ອນຄວາມປີຊາສາມາດຂອງເພິ່ນເອງເປັນຕົ້ນຕໍ່ ຂໍ້ທີ່ວ່າ ເພິ່ນເຂົ້າຫາໄທນັ້ນ
ກໍເພາະເພິ່ນເຂົ້າໃຈເຖິງຄວາມເປັນຈິງວ່າ ຖ້າໄທເອົາລາວເຮົາໄປ

ເຂົາກໍຈະກືນກິນເຮົາຄືດັ່ງທີ່ເຂົາເຮັດຕໍ່ພາກອີສານທີ່ແຕ່ກ່ອນເປັນດິນແດນຂອງລາວຢ່າງຖືກຕ້ອງ
ການທີ່ເພິ່ນເຮັດດັ່ງນັ້ນ
ນັບວ່າເປັນການຄິດການໄກເພາະເຫັນແກ່ຜົນປໂຍດຂອງຊາດບ້ານເມືອງຢ່າງແທ້ຈິງ
ເພາະຢ່າງໜ້ອຍເພິ່ນກໍໄດ້ເຮັດທຸກຢ່າງໃນຄວາມສາມາດຂອງເພິ່ນເພື່ອເມືອງລາວນີ້ຈະຊົງໄວ້ຊຶ່ງ
ຄວາມເປັນລາວ ບໍ່ໃນຮູບໃດກໍຮູບນຶ່ງທີ່ຄົນລາວເຮົາຈະພໍຮັບໄດ້ ສ່ວນຂໍ້ສຸດທ້າຍນັ້ນ
ບາງຄົນເຮັດເປັນເລື້ອງໃຫຍ່ ເພາະວ່າເຈົ້າສຸວັນນະພູມມາເອົາເມັຍຄົນຝຣັ່ງ ກໍເລີຍອ່ຽງອໍກັບຝຣັ່ງ
ແລະເຈົ້າສຸພານຸວົງເອົາເມັຍວຽດ ວຽດກໍເລີຍຈຸດດັງໄດ້ງ່າຍ ດັ່ງນັ້ນເມື່ອເຈົ້າເພັຊຣາດມີເມັຽໄທ
ບາງຄົນກໍສລຸບເອົາງ່າຍໆວ່າ ເພິ່ນຕ້ອງອ່ຽງໄທແນ່ນອນ ຟັງເຜີນໆກໍພໍຟັງໄດ້ ແຕ່ຖ້າເບິ່ງຄັກໆ
ຈະເຫັນວ່າ ກໍຣະນີເພິ່ນກັບກໍຣະນີຂອງພວກນ້ອງເພິ່ນ ມັນຕ່າງກັນຫລາຍ
ເພິ່ນເອົາເມັຽໄທກໍຕໍ່ເມື່ອເພິ່ນບໍ່ມີບົດບາດໃນການເມືອງຂອງລາວອີກແລ້ວ
ການເອົານັ້ນເປັນເພື່ອພຽງການຢູ່ລອດຊີ່ໆ ບໍ່ແມ່ນອິດທິພົນໃດໆຈາກຝ່າຍນັ້ນໆ ສລຸບແລ້ວ
ເປັນອັນວ່າ ເຈົ້າເພັຊຣາດອ່ຽງໄທນັ້ນ ຟັງບໍ່ຄ່ອຍຂຶ້ນ ເພາະຖ້າເພິ່ນອ່ຽງໄທແທ້
ແຕ່ໃນຖານະຂອງລັຖບຸຣຸດຂອງຊາດແລ້ວ ສັດຕູຂອງສັດຕູກໍຄືເພື່ອນດີໆຂອງເຮົານັ້ນເອງ

## IV. ຄວາມປີ້ນປອກຂອງນະໂຍບາຍປະເທດມະຫາອຳນາດໂດຍສະເພາະສະຫະລັດອະເມຣິກາ

ດັ່ງທີ່ຮູ້ກັນດີວ່າ ປະເທດມະຫາອຳນາດອັນມີໄຊວຽດອັງກິດແລະອະເມຣິກາໄດ້ປະກາດວ່າ
ມະຫາອຳນາດຈະໃຫ້ທຸກໆປະເທດທີ່ເປັນຫົວເມືອງຂຶ້ນເປັນເອກລາດປົກຄອງຕົນເອງ
ແລະອະເມຣິກາເອງກໍໄດ້ສົ່ງຄົນຂອງເຂົາເຂົ້າມາຊ່ອຍປະເທດຫົວເມືອງຂຶ້ນ
ຈົນວ່າພວກຜູ້ນຳລາວຈົນຮອດຜູ້ນຳວຽດເຊື່ອວ່າ ອະເມຣິການັ້ນຈິງຈັງແທ້
ເຈົ້າເພັຊຣາດເອງກໍຕົກຄຸມເຊື່ອອະເມຣິກາ ຊຶ່ງເບິ່ງຕາມສະພາບການຕອນນັ້ນ
ອັນໝາຍເຖິງຕອນທີ່ປະທານາທິບໍດີຣຸສແວວຍັງກໍາອຳນາດນັ້ນ ເຂົາຕ້ອງການແນວນັ້ນແທ້
ແຕ່ພໍປະທານາທິບໍດີຣຸສແວວເສັຽຊີວິດລົງຢ່າງກະທັນຫັນ ແນວທາງຂອງອະເມຣິກາກໍປ່ຽນແປງ
ເປັນອັນວ່າ
ເຂົາຫັນມາສນັບສນູນໃຫ້ຝຣັ່ງແລະອັງກິດເຈົ້າຂອງອະນານິຄົມເກົ່າເຂົ້າໄປປົກຄອງໄດ້ດັ່ງເດີມ
ການປ່ຽນແປງຫລືຄວາມປີ້ນປອກຂອງອະເມຣິການີ້
ຄືຕົ້ນຕໍ່ຂອງບັນຫາແລະຄວາມຂັດແຍ້ງໃນລາວ
ເພາະຖ້າພຽງແຕ່ອະເມຣິກາບໍ່ເຫັນພ້ອມໃຫ້ຝຣັ່ງກັບຄືນມາມີອຳນາດໃນອິນດູຈີນ
ບັນຫາລາວກໍຄົງຈະຕົກໄປ ແລະເມືອງລາວກໍບໍ່ຕ້ອງມາເສັຽເວລາຂ້າຟັນລັ່ນແທງກັນ

ເປັນເວລາຫລາຍສິບປີ ຊຶ່ງຜົນສຸດທ້າຍກໍຄື ສິ່ງທີ່ເຮົາໄດ້ມາໃນຂະນະນີ້
ກໍບໍ່ມີຫຍັງດີຫລາຍໄປກ່ວາ ສິ່ງທີ່ປວງຊົນລາວເຝົ້າຝັນເຝົ້າຕໍ່ສູ້ມານັ້ນເລີຍ
ອີກຢ່າງຄົນໆດຽວທີ່ຈະສ້າງເມືອງລາວໃຫ້ແຂ່ງແກ່ນ ໃຫ້ເປັນທີ່ເອກອ້າງຂອງຄົນລາວແທ້ໆໄດ້
ກໍຕ້ອງມາລະເຫ່ເຣຣ່ອນໄປຕ່າງແດນ ເພາະຄວາມບໍ່ແນ່ນອນແລະຈິງຈັງຂອງອະເມຣິກາແທ້ໆ

## V. ເປັນຫຍັງຜູ້ນຳຣຸ່ນໃຫມ່ສໄມໄດ້ເອກລາດຂອງລາວ ຈຶ່ງບໍ່ມັກເຈົ້າເພັຊຣາດ ຍົກຕົວຢ່າງທ່ານຜຸ່ຍຊະນະນິກອນເປັນຕົ້ນ?

ຕາມທັສນະຂອງຂ້າພະເຈົ້າ ນີ້ຄົງຈະເປັນບັນຫາທີ່ເຮື້ອຮັງຂອງເມືອງລາວແທ້ໆ
ເພາະໃຜຕ່າງກໍວ່າຕົນເອງນັ້ນດີກ່ວາຫມູ່ ຖ້າວ່າຄາວໃດຕົນເອງນັ້ນມີໂອກາດ ແລ້ວແມ່ນວ່າ
ຄົນທີ່ເຄີຍທຳຄວາມດີໃຫ້ແກ່ຊາດບ້ານເມືອງເມື່ອກ່ອນນັ້ນ ບໍ່ມີຄຸນຄ່າລາຄາຫຍັງເລີຍ
ນຶ່ງມາອາດຈະເປັນຍ້ອນວ່າ ຄົນຣຸ່ນນີ້ບໍ່ມັກເຊື້ອສາຍເຈົ້າທັງຫລາຍ
ທີ່ເຫມືອນນຶ່ງມີສິດອຳນາດໂດຍບໍ່ໄດ້ເຮັດຫຍັງທີ່ເປັນປໂຍດແກ່ຊາດບ້ານເມືອງເລີຍ
ສອງມາເຂົາເຈົ້າອາດຈະຄິດວ່າ ຕົນນັ້ນມີຄວາມສາມາດຫລາຍກ່ວາ
ດັ່ງນັ້ນຕົນຄວນຈະມາເປັນນາຍແທນພວກເຈົ້າ ທີ່ລ້າສໄມທັງຫລາຍ
ຕາມທີ່ເຫັນໆໃນປວັດສາດລາວ ເຫດການລົ້ມແລ້ວຢຽບນີ້
ກໍມີໃຫ້ເຫັນເຊັ່ນເຊື້ອສາຍຂອງເຈົ້າອະນຸທີ່ກັບມາສູ່ວຽງຈັນອີກຄັ້ງ
ເຈົ້າໃຫຍ່ນາຍໂຕເມືອງລາວຜູ້ໃຫມ່ຊຶ່ງເປັນຄົນລາວແທ້ໆບໍ່ຫລຽວຕາມອງເລີຍ
ທ່ານເຫລົ່ານັ້ນທັງທີ່ຍັງມີຄວາມສາມາດ ກໍກາຍເປັນຄົນທີ່ບໍ່ມີໃຜຕ້ອງການ ຕາມຂ້າພະເຈົ້າສັງເກດ
ພວກເຈົ້ານາຍທີ່ບໍ່ມີກຳເນີດເປັນເຈົ້າທັງຫລາຍ ບາງຄົນອາດຈະມີຄວາມປີຊາສາມາດແທ້
ເຊັ່ນທ່ານກະຕ່າຍເປັນຕົ້ນ
ແຕ່ຄົນເຫລົ່ານີ້ຍັງຂາດສິ່ງທີ່ຄົນລາວເຊື່ອຫນັກເຊື່ອຫນາໃນຕົວຂອງບຸກຄົນທີ່ຈະໄດ້ຖືວ່າ
ຄຸນບ້ານຄຸນເມືອງແທ້ ນັ້ນກໍຄື ສັດທາບາຣະມີໃນຕົວບຸກຄົນນັ້ນ
ສັດທາບາຣະມີນີ້ອາດມາຈາກຊາດກຳເນີດ ຜົນງານ ແລະບຸກຄະລິກລັກສະນະຂອງຄົນນັ້ນໆ
ທັງສາມສິ່ງນີ້ມີໃນຕົວຂອງເຈົ້າເພັຊຣາດຢ່າງເຕັມທີ່
ແຕ່ເທົ່າທີ່ສັງເກດຄືບໍ່ເຫັນມີໃນຫມູ່ຜູ້ນຳລາວຄົນອື່ນເລີຍ ແມ້ກະທັ່ງເຈົ້າສຸວັນນະພູມມາ
ເຈົ້າສຸພານຸວົງ ຊຶ່ງເປັນເຈົ້າຈອມຄືກັນ ຍິ່ງຄົນອື່ນແລ້ວ ກໍຍິ່ງໄປກັນໃຫຍ່ ອາດຈະດ້ວຍແຮງອິດສາ
ຫລືຖືດີວ່າ ຕົນເອງນັ້ນໄດ້ດີແລ້ວ ກໍເລີຍຍິ່ງຍະໂສ
ເຫດການທີ່ມະຫາສີລາໄດ້ເລົ່າໄວ້ໃນຫນັງສືຂອງເພິ່ນຈຶ່ງເກີດຂຶ້ນ ເລື້ອງມີວ່າ

ພາຍຫລັງເຈົ້າເພັຊຣາດກັບຄືນມາລາວອີກຄັ້ງໃນປີ໑໙໕໗ ທາງຝ່າຍລັຖບານສໄມນັ້ນ
ອັນມີທ່ານຜຸ່ຍເປັນນາຍົກໄດ້ບຸກຣຸກຍົກຍ້າຍເຂົ້າຂອງສົມບັດຂອງເຈົ້າເພັຊຣາດ
ອອກຈາກໂຮງຢູ່ວຽງຈັນ ຂຶ້ນໃສ່ເຮືອໄປຫລວງພະບາງ ໂດຍບໍ່ບອກໃຫ້ພະອົງຮູ້ລ່ວງໜ້າ
ຜູ້ເຫັນເຫດການຜູ້ນຶ່ງເລົ່າວ່າ ເມື່ອເຈົ້າເພັຊຣາດຮູ້ຂ່າວວ່າ ເຮືອຂົນເຄື່ອງຂອງພະອົງໄປຮອດທ່າ
ຈຶ່ງຟ້າວອອກມາເບິ່ງ ແລະເຫັນຮູບຢືນຂອງພະອົງ ຖືກວາງຢອງຕາກແດດຢູ່ເທິງຫລັງຄາເຮືອ
ກໍແຄ້ນເຄືອງຈົນນ້ຳຕາໄຫລ ດ້ວຍຮູ້ສຶກຖືກຫມິ່ນພະກຽດໃນທີ່ສຸດ
ເລື້ອງດັ່ງກ່າວສໍ່ສະແດງໃຫ້ເຫັນວ່າ
ຄົງຍັງອີກດົນກ່ວາຜູ້ນຳລາວບໍ່ວ່າຣຸ່ນໃດໆຈະເຫັນຄຸນຄ່າຂອງຄວາມເປັນຜູ້ນຳທີ່ປວງຊົນລາວມອບໃ
ຫ້ຜູ້ນຳຂອງພວກເຂົາເຈົ້າຢ່າງແທ້ຈິງ
ເຊັ່ນທີ່ເຂົາເຈົ້າໄດ້ມອບໃຫ້ທັງກາຍແລະໃຈແກ່ເຈົ້າເພັຊຣາດລັຖບຸຣຸດຜູ້ຍິ່ງຽວຂອງຊາດລາວນັ້ນເອງ

## VI. ຖ້າບໍ່ມີເຫດການປວັດສາດເຊັ່ນສົງຄາມໂລກຄັ້ງທີສອງເກີດຂຶ້ນ ເຈົ້າເພັຊຣາດຈະເປັນແນວໃດ?

ນີ້ເປັນຂໍ້ທີ່ຄວນຄິດໄຕ່ຕອງຢ່າງຍິ່ງ ເພາະຖ້າບໍ່ມີເຫດການຄັ້ງນັ້ນ
ເຈົ້າເພັຊຣາດກໍຄົງບໍ່ໂດດເດ່ນຂຶ້ນມາໃນປວັດສາດລາວ
ບໍ່ຕ່າງຫຍັງກັບເຈົ້າອະນຸທີ່ເຖິງເພິ່ນດັບດິ້ນສິ້ນໂຄດ ແຕ່ວິຣະກັມທີ່ບໍ່ຍອມຈຳນົນຂອງເພິ່ນນັ້ນ
ກາຍເປັນຕຳນານກ່າວຂານໃຫ້ລູກຫລານທີ່ຮັກຊາດລາວສືບຕໍ່ໄປ ພ້ອມດ້ວຍກັນນັ້ນ
ເຫດການນຶ່ງໆທີ່ເກີດຂຶ້ນ ກໍສງັກການກ້າວໄປຂອງຊາດນັ້ນໆ ເປັນອີກຕັ້ງຫລາຍສິບປີ
ຫລືອາດຈະເປັນຫລາຍຮ້ອຍປີ ກໍອາດເປັນໄດ້
ເຊັ່ນກໍຣະນີຂອງເຈົ້າອະນຸທີ່ບ້ານເມືອງຕ້ອງເຖິງຂັ້ນເກືອບສິ້ນຊາດເລີຍ
ຕາມການຄາດຄະເນຂອງຂ້າພະເຈົ້າ ຫາກບໍ່ມີສົງຄາມໂລກຄັ້ງທີສອງເກີດຂຶ້ນ
ມັນມີທາງເປັນໄປໄດ້ສອງທາງໃຫຍ່ໆຄື

ກ. ເມືອງລາວຂຶ້ນກັບສະຫະພັນອິນໂດຈີນອັນມີວຽດນາມເປັນຜູ້ຄຸມ
ຄວາມເປັນໄປໄດ້ຢ່າງນີ້ຂ່ອນຂ້າງຫລາຍ
ເພາະຝຣັ່ງມີໂຄງການຈະເອົາຄົນວຽດທີ່ເຂົາຄິດວ່າຫ້າວຫັນກ່ວາຄົນລາວເຂົ້າມາຫັນປ່ຽນເມືອງລາວ
ໃຫ້ລ້ຽງກຸ້ມຕົນເອງໄດ້ ໂດຍບໍ່ຕ້ອງບໍ່ລໍແຕ່ງົບປະມານຈາກສ່ວນກາງ
ເຈົ້າເພັຊຣາດເຖິງຈະອາດຣະແວງການກືນກິນຂອງວຽດ ກໍຄົງຈະເຮັດຫຍັງບໍ່ໄດ້ຫລາຍ
ເພາະຖານກຳລັງຂອງເພິ່ນລະໂຫລມຫລາຍ

ທ້າຍທີ່ສຸດຖ້າເຂົາບໍ່ເຊັ່ງເພິ່ນອອກຈາກຕຳແໜ່ງທີ່ຊີ້ເປັນຊີ້ຕາຍໄດ້
ເພິ່ນກໍຕ້ອງຖືກຄຸມແຈຈົນເຮັດຫຍັງໃຫ້ແກ່ຊາດບ້ານເມືອງບໍ່ໄດ້ນັ້ນເອງ

ຂ. ເມືອງລາວອາດຈະຄ່ອຍໆແຂງຕົວຂຶ້ນ ເພາະຄົນຂອງເຈົ້າເພັດຊະຣາດກະຈາຍໄປທົ່ວປະເທດ ການປົກຄອງຈະເລີ່ມມີປະສິດທິພາບ ແລະຖ້າເພິ່ນຫາກປະສານມືຮ່ວມງານກັບເຈົ້າສີສວ່າງວົງໄດ້ ກໍຄົງມີອຳນາດຕໍ່ຮອງກັບນະໂຍບາຍຂອງຝຣັ່ງເສດທີ່ຢາກເອົາວຽດເຂົ້າມາເມືອງລາວຢ່າງແທນຄົນລາວຜູ້ເປັນເຈົ້າຂອງປະເທດນັ້ນເອງ

## VII.
## ເປັນຫຍັງທາງລະບອບໃຫມ່ຈຶ່ງບໍ່ໃຫ້ຄວາມສຳຄັນແກ່ເຈົ້າເພັດຊະຣາດໃນການຂຽນປະວັດສາດສະບັບຫລັງໆນີ້?

ຄຳຖາມຂໍ້ນີ້ ທຳອິດຂ້າພະເຈົ້າກໍງົງຢູ່ຄືກັນ
ເພາະເຈົ້າເພັດຊະຣາດກໍເປັນຜູ້ນຶ່ງທີ່ຕໍ່ສູ້ເພື່ອຊາດບ້ານເມືອງ
ມີຄຸນຄ່າໃນພາກຕົວຈິງກວ່າຫລາຍໆຄົນທີ່ທາງລະບອບໃຫມ່ຕື່ມສີສັນປັ້ນແຕ່ງຂຶ້ນເອງ
ບາດວ່າຂ້າພະເຈົ້າໄດ້ມາສຶກສາຈາກຫລາຍແງ່ຫລາຍທາງ ຈຶ່ງພໍເຂົ້າໃຈວ່າ
ຖ້າເຫັນຄຸນຄ່າຂອງເພິ່ນຫລາຍ ກໍເທົ່າກັບວ່າ
ອັນຂະບວນການຄອມມູນິດລາວໃນສໄມນັ້ນຊ່າງກະຈ້ອຍຮ້ອຍຢ່າງສິ້ນດີ
ການໃຫ້ກຽດລະບອບສັກດີນາເກົ່າໆນັ້ນ ເຊັ່ນເຈົ້າຟ້າງຸ່ມ ເຈົ້າໄຊເສດຖາ ຫລືເຈົ້າອະນຸ
ຍັງເປັນເລື້ອງຫ່າງໄກຫລາຍ ເພາະມັນບໍ່ຫຍັງພົວພັນກັບຂະບວນການຂອງລະບອບໃຫມ່
ແຕ່ເລື້ອງເຈົ້າເພັດຊະຣາດ ຖ້າຮັບຫລາຍ
ກໍເທົ່າກັບການຊີ້ໃຫ້ເຫັນເຖິງການໄຮ້ຄຸນຄ່າລາຄາຂອງຕົນໃນຫມູ່ຊົນຊາວລາວເທົ່ານັ້ນເອງ
ແຕ່ກໍບໍ່ແນ່ ເມື່ອສະພາບການປ່ຽນໄປ ເພາະຄວາມຜັນແປຂອງໂລກຢູ່ທຸກໆມື້
ທາງລະບອບໃຫມ່ອາດຈະໃຫ້ຄວາມສຳຄັນຂອງເຈົ້າເພັດຊະຣາດໃນປວັດສາດລາວຫລາຍຂຶ້ນ
ກໍເປັນໄປ ຄວາມຈິງແທ້ຈະເປັນຢ່າງໃດ
ກໍຂໍໃຫ້ສະພາບການແລະຈິດສຳນຶກຂອງຜູ້ທີ່ສ່ວນຮັບຜິດຊອບຈັດການເອງ

## VIII. ຄຳທີ່ວ່າ ເຈົ້າເພັດຊະຣາດຄືລັຖບຸຣຸດຂອງຊາດລາວນັ້ນ ມີນ້ຳຫນັກຂນາດໃດ?

ຂ້າພະເຈົ້າວ່າ ຄຳຖາມນີ້ຂຶ້ນກັບຈິດສຳນຶກຂອງຄົນລາວແຕ່ລະຄົນນັ້ນເອງ
ຫາກຖາມຄົນທີ່ມີຈິດສຳນຶກທີ່ສາມາດໂຍ່ງໄປເຖິງບັນພະບຸຣຸດຂອງລາວເຮົາຫລາຍຮ້ອຍປີແລ້ວ
ຄຳຕອບກໍຄົງຈະຢູ່ໃນຄຳຖາມນັ້ນເອງ
ເພາະໃນສາຍຕາຂອງຜູ້ທີ່ເປັນທັມເຫັນແກ່ຜົນປໂຍດຂອງຊາດບ້ານເມືອງເປັນທີ່ຕັ້ງແລ້ວ
ຜົນງານທີ່ເຈົ້າເພັຊຣາດເຝົ້າພຽນສ້າງມາເປັນເວລາຫລາຍສິບປີ ໃນຕົວຂອງມັນກໍບອກແຈ້ງແລ້ວ
ລອງເອົາຜູ້ນຳລາວໃນສັດຕະວັດທີ໒໐ຫລື໒໑ມາວັດກັນເບິ່ງ ຂ້າພະເຈົ້າຄິດວ່າ
ທັງຜູ້ນຳລະບອບເກົ່າແລະລະບອບໃຫມ່ ຍັງໄກຄວາມເປັນລັຖບຸຣຸດຫລາຍ
ຫລືຖ້າເຮົາຈະປ່ຽນນິຍາມຂອງລັຖບຸຣຸດ ນັ້ນກໍເປັນອີກບັນຫານຶ່ງ ຊຶ່ງຈະຕ້ອງຖົກຖຽງກັນອີກ
ຂ້າພະເຈົ້າເຊື່ອແນ່ວ່າ ເມື່ອຄວາມເປັນຈິງເປັນສິ່ງປະຈັກແລ້ວ ຄົນລາວທີ່ມີຄຸນນະທັມເປັນທີ່ຕັ້ງ
ບໍ່ວ່າຈະຢູ່ແຊກໃດຂອງພັກຝ່າຍການເມືອງ ກໍຈະຕ້ອງຮັບວ່າ ລັຖບຸຣຸດຂອງຊາດລາວບໍ່ແມ່ນຜູ້ໃດ
ນອກຈາກເຈົ້າເພັຊຣາດຜູ້ດຽວທີ່ຄົນລາວບໍ່ວ່າໃນອະດີດໃນປັດຈຸບັນຫລືໃນອະນາຄົດຈະຮັບໄດ້ຢ່າງ
ພາກພູມຂອງຄວາມເປັນລາວນັ້ນເອງ

ທ້າຍນີ້ ເລື້ອງເຈົ້າເພັຊຣາດເປັນທັງເລື້ອງທີ່ພາກພູມໃຈແລະເສົ້າໃຈໄປໃນຕົວ ເພາະຕາມທີ່ເຫັນໆ
ຄວາມເປັນໄປໄດ້ນັ້ນມີຫລາຍ ແຕ່ກໍເຫມືອນເປັນໂຊກຊະຕາຂອງບ້ານເມືອງ
ທີ່ຄວາມເປັນໄປໄດ້ນັ້ນ ໄດ້ຖືກບັນທອນໄປຢ່າງຫນ້າເສັຽດາຍ ເຖິງຢ່າງໃດກໍດີ
ມັນກໍເປັນອຸທາຫອນໃຫ້ຄົນຣຸ່ນຫລັງໄດ້ຕະຫນັກວ່າ ການທຳຄວາມດີນັ້ນມັນບໍ່ມີວັນເສັຽຫາຍ
ຊາດບ້ານເມືອງແລະປວງຊົນລາວທີ່ຮັກຄວາມເປັນທັມ
ຮັກຄວາມຖືກຕ້ອງຈະຍັງຄົງຈາຣຶກໄວ້ຕາບເທົ່າໃດໆ
ຂໍໃຫ້ດວງວິນຍານຂອງເຈົ້າເພັຊຣາດເຊື້ອຫນໍ່ຂອງຂຸນບໍຣົມຜູ້ມີເລືອດລາວແທ້ ຈົ່ງໄປສູ່ສຸຂຕິເຖີດ
ພວກເຮົາເລືອດລາວແທ້ ຈະຂໍນຳທາງທີ່ເພິ່ນໄດ້ທ່າງໄວ້
ຈົນກ່ວາແຜ່ນດິນລາວຈະໄດ້ກາຍເປັນດິນດຳນ້ຳຊຸ່ມຂອງປວງຊົນລາວຢ່າງແທ້ຈິງ



ເຈົ້າມະຫາ ອຸປະຣາດ ເພັດຊະຣາດ